ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ

ເລກທີ 2511 /ກຂອ.ປຂອ

ນະຄອນຫຼວງວຽງຈັນ, ວັນທີ 14 ພຶດສະພາ 2019

# ແຈ້ງການ

ເຖິງ : ບັນດາທ່ານຜູ້ອຳນວຍການ ບໍລິສັດ ນຳເຂົ້າ ແລະ ສົ່ງອອກຍານພາຫະນະ.

ເລື່ອງ : ການນຳໃຊ້ລະບົບແຈ້ງພາສີປະຕູດຽວ (LNSW).

- ອີງຕາມໜັງສືສະເໜີ ຂອງ ບໍລິສັດ ຮ່ວມພັດທະນາ ລະບົບແຈ້ງພາສີປະຕູດຽວ ຈຳກັດ ເລກທີ 013/LNSW, ລົງວັນທີ 05 ພຶດສະພາ 2019

ກົມການນຳເຂົ້າ ແລະ ສົ່ງອອກ (ກຂອ) ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ລະບົບແຈ້ງພາສີປະຕູດຽວ (LNSW) ໄດ້ປ່ຽນທີ່ຢູ່ເວບໄຊ www.app.laonsw.net (ເກົ່າ) ມາເປັນ www. Prod.laonsw.net (ໃໝ່) ໂດຍຈະໄດ້ເລີ່ມນຳໃຊ້ແຕ່ວັນທີ 10 ພຶດສະພາ 2019 ເປັນຕົ້ນໄປ. ສະນັ້ນ ຈິ່ງແຈ້ງມາຍັງບັນດາ ທ່ານ ທີ່ໃຊ້ລະບົບດັ່ງກ່າວໃຫ້ປ່ຽນມານຳໃຊ້ທີ່ຢູ່ໃໝ່.

ພ້ອມດຽວກັນ, ສຳລັບບໍລິສັດໃດທີ່ຍັງບໍ່ທັນໄດ້ລົງທະບຽນນຳໃຊ້ແມ່ນໃຫ້ສະເໜີຫາ ບໍລິສັດ ຮ່ວມພັດທະນາລະບົບແຈ້ງພາສີປະຕູດຽວ ຈຳກັດ ເພື່ອສະໝັກຂໍຝຶກອົບຮົມ ແລະ ລະຫັດຜູ້ນຳໃຊ້ລະບົບດັ່ງກ່າວໂດຍດາວໂຫຼດເອົາແບບຟອມໄດ້ໃນເວບໄຊທີ່ລະບຸໄວ້ຂ້າງເທິງ ຫຼື ເວບໄຊ www.laotradeportal.gov.la

ດັ່ງນັ້ນ, ຈິ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າກົມ

ສຸລິຍົນ ພິລາວົງ